ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 0477. /ກງ

ນະຄອນຫຼວງວຽງຈັນ, ວັນທີ 18 ກຸມພາ 2020

# ແຈ້ງການ

ເຖິງ: ກົມພາສີ, ບັນດາກອງຄຸ້ມຄອງພາສີ ແລະ ດ່ານພາສີສາກົນຊາຍແດນ ຂອບເຂດທົ່ວປະເທດ, ກົມສ່ວຍສາອາກອນ, ບັນດາສ່ວຍສາອາກອນປະຈຳແຂວງ,

ເລື່ອງ: ການເພີ່ມທະວີ ການຈັດຕັ້ງປະຕິບັດ ລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າ ທຳນຽມທາງ ສະບັບເລກທີ 001/ປປທ, ລົງວັນທີ 20 ກັນຍາ 2017.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີສະບັບປັບປຸງບາງມາດຕາ ສະບັບເລກທີ 057/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງການເງິນ;
- ອີງຕາມ ໜັງສືຂອງກົມສ່ວຍສາອາກອນ ສະບັບເລກທີ 0367/ກສອ, ລົງວັນທີ 12 ກຸມພາ 2020.
- ອີງຕາມ ສະໂນດນຳສົ່ງຂອງກົມພາສີ ສະບັບເລກທີ 0623/ກພສ, ລົງວັນທີ 05 ກຸມພາ 2020;

## ລັດຖະມົນຕີກະຊວງການເງິນ ແຈ້ງການ ດັ່ງນີ້:

1. ພາຫະນະທີ່ຂຶ້ນທະບຽນຢູ່ ສປປ ລາວ ທີ່ຈະເດີນທາງອອກໄປຕ່າງປະເທດ ຕ້ອງປະກອບເອກະສານຄົບຖ້ວນ ແລະ ຖືກຕ້ອງຕາມລະບຽບການ ເຊັ່ນ: ທະບຽນລົດ, ໃບຢັ້ງຢືນການກວດກາເຕັກນິກ, ປຶ້ມອະນຸຍາດລົດຂົນສົ່ງລະຫວ່າງປະເທດ ຫຼື ໃບອະນຸຍາດນຳອອກ-ນຳເຂົ້າພາຫະນະຊົ່ວຄາວ, ສັນຍາປະກັນໄພພາຫະນະ ແລະ ເອກະສານອື່ນໆຕາມກົດໝາຍປະເທດສົ່ງອອກ ແລະ ປະເທດນຳເຂົ້າກຳນົດໄວ້ ແລະ ມີອາຍຸການນຳໃຊ້ຕາມກົດໝາຍແລະລະບຽບການ, ພ້ອມນັ້ນ ຈະຕ້ອງມີ **"ໃບເສຍຄ່າທຳນຽມທາງປະຈຳປີ ໃຫ້ຄົບຖ້ວນ"** ຕາມລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 001/ປປທ, ລົງວັນທີ 20 ກັນຍາ 2017 ວ່າດ້ວຍ ຄ່າທຳນຽມທາງ, **"ຖ້າບໍ່ດັ່ງນັ້ນ ຈະບໍ່ໄດ້ຮັບອະນຸຍາດໃຫ້ນຳເອົາພາຫະນະດັ່ງກ່າວ ເດີນທາງອອກໄປຕ່າງປະເທດ"**.
2. ມອບໃຫ້ເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນເອົາໃຈໃສ່ແນະນຳໃຫ້ເຈົ້າຂອງພາຫະນະປະກອບເອກະສານ ແລະ ເສຍຄ່າທຳນຽມທາງໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມລະບຽບການກຳນົດ.
3. ມອບໃຫ້ກົມສ່ວຍສາອາກອນ, ສ່ວຍສາອາກອນປະຈຳແຂວງ ສົມທົບກັບ ດ່ານພາສີສາກົນຊາຍແດນ, ທະນາຄານການຄ້າ ຕ່າງປະເທດມະຫາຊົນ ຫຼື ທະນາຄານອື່ນທີ່ມີເງື່ອນໄຂ ຄົ້ນຄວ້າການສ້າງຕັ້ງໜ່ວຍງານໃຫ້ບໍລິການຜ່ານລະບົບທະນາຄານ ສຳລັບການຈັດເກັບຄ່າທຳນຽມທາງຢູ່ຕາມດ່ານພາສີສາກົນທີ່ມີເງື່ອນ ໄຂພຽງພໍ ເພື່ອອຳນວຍຄວາມສະດວກແກ່ເຈົ້າຂອງພາຫະນະ. ສຳລັບ ດ່ານພາສີສາກົນທີ່ຍັງບໍ່ມີເງື່ອນໄຂພຽງພໍໃນການບໍລິການເກັບຄ່າທຳນຽມທາງແບບທັນສະໄໝແມ່ນມອບໃຫ້ເຈົ້າໜ້າທີ່ພາສີປະຈຳດ່ານ ດຳເນີນການຈັດເກັບຄ່າທຳນຽມທາງ ເພື່ອມອບເຂົ້າງົບປະມານຕາມລະບຽບການ.
4. ໃນການຈັດຕັ້ງປະຕິບັດຕົວຈິງມອບໃຫ້ບັນດາກອງຄຸ້ມຄອງພາສີ, ດ່ານພາສີສາກົນ, ສ່ວຍສາອາກອນປະຈຳແຂວງ ແລະ ຂະແໜງການກ່ຽວຂ້ອງ ປະສານສົມທົບກັນຈັດຕັ້ງເຜີຍແຜ່ຄຳແນະນຳສະບັບນີ້ໃຫ້ສັງຄົມໄດ້ຮັບຊາບ ເພື່ອພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນຕາມຄາດໝາຍ.
5. ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີ

ກະຊວງການເງິນ

ສົມດີ ດວງດີ

<u>ບ່ອນສົ່ງ:</u>

| | |
|---|---|
| 1. ເຈົ້າແຂວງ, ນະຄອນຫຼວງ ແຂວງລະ | 01 ສະບັບ; |
| 2. ພະແນກການເງິນແຂວງ ແຂວງລະ | 01 ສະບັບ; |
| 3. ກົມພາສີ | 01 ສະບັບ; |
| 4. ກົມສ່ວຍສາອາກອນ | 01 ສະບັບ; |
| 5. ກອງຄຸ້ມຄອງພາສີ ກອງລະ | 01 ສະບັບ; |
| 6. ກົມຂົນສົ່ງ | 01 ສະບັບ; |
| 7. ສ່ວຍສາອາກອນປະຈຳແຂວງ ແຂວງລະ | 01 ສະບັບ; |
| 8. ດ່ານພາສີສາກົນ ດ່ານລະ | 01 ສະບັບ. |